ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------000---------

ກະຊວງສຶກສາທິການ ແລະ ກິລາ

5104

ເລກທີ.........../ສສກ.ຈຕ.14

ນະຄອນຫຼວງວຽງຈັນ, ວັນທີ............... 04 NOV 2014

**ຂໍ້ຕົກລົງຂອງລັດຖະມົນຕີ**

**ວ່າດ້ວຍການແຕ່ງຕັ້ງຄະນະປະສານງານເພື່ອການພັດທະນາຊັບພະຍາກອນມະນຸດ**

**ຂອງ ຂະແໜງການສຶກສາ ແລະ ກິລາ.**

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ,ລົງວັນທີ 07 ກັນຍາ 2011.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ສະບັບເລກທີ 315/ນຍ, ລົງວັນທີ 22 ພະຈິກ 2013.
- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະປະສານງານເພື່ອການພັດທະນາຊັບພະຍາກອນມະນຸດ ຂອງຂະແໜງການສຶກສາ ແລະ ກິລາ ສະບັບເລກທີ 2286/ສສກ.ຈຕ, ລົງວັນທີ13/06/2014.
- ອີງຕາມ : ການຄົ້ນຄວ້າ ແລະ ການສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ,

**ລັດຖະມົນຕີວ່າການກະຊວງສຶກສາການ ແລະ ກິລາ**

**ຈຶ່ງຕົກລົງ:**

ມາດຕາ 1. ແຕ່ງຕັ້ງຄະນະປະສານງານ ເພື່ອການພັດທະນາຊັບພະຍາກອນມະນຸດ ຂອງຂະແໜງການສຶກສາ ແລະ ກິລາ, ຊຶ່ງປະກອບມີ ດັ່ງນີ້:

| | | | |
|---|---|---|---|
| 1. | ທ່ານ ຈັນສະໝຸດ ແກ້ວສຸດທາ | ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ. | ເປັນປະທານ |
| 2. | ທ່ານ ວິມົນ ສີສຸວະ | ຮອງຫົວໜ້າກົມການເງິນ. | ເປັນຮອງປະທານ |
| 3. | ທ່ານ ຄຳພອນ ສີບຸນເຮືອງ | ຮອງຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ. | ເປັນຮອງປະທານ |
| 4. | ທ່ານ ອຳພາວັນ ກວ້າງມະນີວັນ | ຮອງຫົວໜ້າກົມແຜນການ. | ເປັນຄະນະ |
| 5. | ທ່ານ ກິງສີ ສີສຸພັນ | ຮອງຫົວໜ້າກົມກິດຈະການນັກສຶກສາ. | ເປັນຄະນະ |
| 6. | ທ່ານ ວັນນະເລກ ເຫຼືອງ | ຮອງຫົວໜ້າກົມອາຊີວະສຶກສາ. | ເປັນຄະນະ |
| 7. | ທ່ານ ຄຳເພົ້າ ຈັນເພັງໄຊ | ຮອງຫົວໜ້າກົມການສຶກສາຊັ້ນສູງ. | ເປັນຄະນະ |
| 8. | ທ່ານ ນ. ວາລະດຸນ ອາມາຣາທາດາ | ຮອງຫົວໜ້າກົມສ້າງຄູ. | ເປັນຄະນະ |
| 9. | ທ່ານ ສິງຄຳ ນາລົມ | ຮອງຫົວໜ້າກົມກິລາລະດັບສູງ. | ເປັນຄະນະ |
| 10. | ທ່ານ ໄມບູນ ຜານິດ | ຮອງຜູ້ອຳນວຍການສະຖາບັນພັດທະນາການບໍລິຫານການສຶກສາ | ເປັນຄະນະ |
| 11. | ທ່ານ ບົວໄຂ ພິມມະຈັນ | ຫົວໜ້າພະແນກພັດທະນາລັດຖະກອນ | ເປັນເລຂາກອງປະຊຸມ |
| 12. | ທ່ານ ນ. ມິລິນດາ ພະເມືອງ | ວິຊາການ ກົມຈັດຕັ້ງ ແລະ ພະນັກງານ | ເປັນຜູ້ຊ່ວຍວຽກ |

ມາດຕາ 2. ຄະນະປະສານງານເພື່ອພັດທະນາຊັບພະຍາກອນມະນຸດ ຂອງຂະແໜງການສຶກສາ ແລະ ກິລາ ມີສິດ ແລະ ໜ້າທີ່ດັ່ງນີ້:

1) ວາງແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆ ເພື່ອສ້າງແຜນຍຸດທະສາດພັດທະນາ ຊັບພະຍາກອນມະນຸດ ຂອງຂະແໜງການສຶກສາທິການ ແລະ ກິລາ.
2) ຄົ້ນຄວ້າ ແລະ ສ້າງແຜນຍຸດທະສາດເພື່ອການພັດທະນາຊັບພະຍາກອນມະນຸດ ຂອງຂະແໜງການສຶກສາທິການ ແລະ ກິລາແຕ່ປີ 2016-2025.
3) ຈັດຕັ້ງກອງປະຊຸມຄົ້ນຄວ້າ ແລະ ປຶກສາຫາລື ຮ່ວມກັບບັນດາກົມ ແລະ ອົງການທຽບເທົ່າກົມ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງເພື່ອການພັດທະນາຊັບພະຍາກອນມະນຸດ ຂອງຂະແໜງການສຶກສາທິການ ແລະ ກິລາ .
4) ເຂົ້າຮ່ວມກອງປະຊຸມຄົ້ນຄວ້າ ແລະ ປຶກສາຫາລື ຮ່ວມກັບຄະນະປະສານງານພັດທະນາຊັບພະຍາກອນ ມະນຸດ ຂອງບັນດາກະຊວງ ແລະ ອົງການທຽບເທົ່າກະຊວງ.
5) ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນຍຸດທະສາດ ເພື່ອການພັດທະນາ ຊັບພະຍາກອນມະນຸດ ຂອງຂະແໜງການສຶກສາທິການ ແລະ ກິລາ.
6) ລາຍງານການຈັດຕັ້ງປະຕິບັດແຜນຍຸດທະສາດໃຫ້ກອງເລຂາຄະນະພັດທະນາຊັບພະຍາກອນມະນຸດ ແລະ ຄະນະນຳກະຊວງສຶກສາທິການ ແລະ ກິລາ ຮັບຊາບເປັນແຕ່ລະໄລຍະ.
7) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ຂອງກອງເລຂາຄະນະພັດທະນາຊັບພະຍາກອນ ມະນຸດ ແລະ ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ.

ມາດຕາ 3. ໃຫ້ຄະນະປະສານງານ ເພື່ອການພັດທະນາຊັບພະຍາກອນມະນຸດຂອງຂະແໜງການສຶກສາທິການ ແລະ ກິລາ ແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບ ໃຫ້ບັນດາກົມທີ່ໄດ້ຮັບການແຕ່ງຕັ້ງ ຢ່າງລະອຽດ.

ມາດຕາ 4. ງົບປະມານຮັບໃຊ້ໃນການເຄື່ອນໄຫວວຽກງານຕ່າງໆ ແມ່ນມາຈາກງົບປະມານປະຈຳປີການພັດທະນາ ຊັບພະຍາກອນມະນຸດ ຂອງຂະແໜງການສຶກສາທິການ ແລະ ກິລາ ແລະ ອົງການຈັດຕັ້ງສາກົນ.

ມາດຕາ 5. ໃຫ້ຫ້ອງການກະຊວງສຶກສາທິການ ແລະ ກິລາ, ກົມຈັດຕັ້ງ ແລະ ພະນັກງານ, ບັນດາກົມທີ່ໄດ້ຮັບ ການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 6. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮ. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ,

ນ.ແສງເດືອນ ຫຼ້າຈັນທະບູນ

+ ບ່ອນສົ່ງ:

- ຫ້ອງການກະຊວງສຶກສາທິການ ແລະ ກິລາ 1 ສະບັບ.
- ກົມຈັດຕັ້ງ ແລະ ພະນັກງານ 1 ສະບັບ.
- ບັນດາກົມ ແລະ ອົງການທຽບເທົ່າກົມ ພາກສ່ວນລະ 1 ສະບັບ.
- ເກັບມ້ຽນ 1 ສະບັບ.